ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---====000===-----

ແຂວງ ສາລະວັນ

ພະແນກເຕັກໂນໂລຊີ ແລະ ການສື່ສານ

ເລກທີ 221/ພຕສ.ສວ

ລົງວັນທີ 02 SEP 2022

# ແຈ້ງການ

ເຖິງ: ຫ້ອງການເຕັກໂນໂລຊີ ແລະ ການສື່ສານ ເມືອງ.

ເລື່ອງ: ໃຫ້ຜູ້ປະກອບການດໍາເນີນທຸລະກິດ ຄ້າຍຄືຮ້ານອິນເຕີເນັດກາເຟ ຍົກເລີກການໃຫ້ບໍລິການ.

- ອີງຕາມ: ຂໍ້ຕົກລົງຂອງລັດຖະມົນຕີກະຊວງເຕັກໂນໂລຊີ ແລະ ການສື່ສານ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງພະແນກເຕັກໂນໂລຊີ ແລະ ການສື່ສານ ແຂວງ, ນະຄອນຫຼວງ ສະບັບເລກທີ732/ກຕສ, ລົງວັນທີ 28 ກຸມພາ 2022.
- ອີງຕາມ: ຂໍ້ຕົກລົງ ວ່າດ້ວຍການໃຫ້ບໍລິການອິນເຕີເນັດກາເຟ, ສະບັບເລກທີ 828/ປທສ, ລົງວັນທີ 11 ມີນາ 2015.

ຫົວໜ້າພະແນກເຕັກໂນໂລຊີ ແລະ ການສື່ສານ ແຂວງສາລະວັນ ຂໍແຈ້ງມາຍັງຫ້ອງການເຕັກໂນໂລຊີ ແລະ ການສື່ສານ ເມືອງ, ບັນດາຫົວໜ່ວຍຜູ້ປະກອບການຄ້າຍຄືຮ້ານອິນເຕີເນັດກາເຟ ໃຫ້ຮັບຊາບ ແລະ ປະຕິບັດຢ່າງເຂັ້ມງວດດັ່ງນີ້:

1. ໃຫ້ບັນດາຜູ້ປະກອບການທີ່ແອບອ້າງເປັນຮ້ານອິນເຕີເນັດກາເຟ ໃນທົ່ວແຂວງ ສາລະວັນ ໃຫ້ຢຸດເຊົາການດໍາເນີນກິດຈະການ ເນື່ອງຈາກວ່າການດໍາເນີນທຸລະກິດດັ່ງກ່າວ ບໍ່ໄດ້ຮັບການອະນຸຍາດທີ່ຖືກຕ້ອງຕາມລະບຽບກົດໝາຍ ຈາກພະແນກເຕັກໂນໂລຊີ ແລະ ການສື່ສານແຂວງ.
2. ບັນດາຜູ້ປະກອບການ ທີ່ໃຫ້ບໍລິການຄ້າຍຄືອິນເຕີເນັດກາເຟ ມີຈຸດປະສົງຢາກປະກອບເປັນຮ້ານອິນເຕີເນັດກາເຟ, ຮ້ານດັ່ງກ່າວຕ້ອງປັບປຸງໃຫ້ໄດ້ຕາມມາດຖານເງື່ອນໄຂ ທີ່ໄດ້ກໍານົດໄວ້ໃນ ຂໍ້ຕົກລົງ ສະບັບເລກທີ 828/ປທສ, ລົງວັນທີ 11 ມີນາ 2015 ແລ້ວປະສານຫາຫ້ອງການເຕັກໂນໂລຊີ ແລະ ການສື່ສານ ເມືອງ ເພື່ອປະສານຫາພະແນກເຕັກໂນໂລຊີ ແລະ ການສື່ສານ ແຂວງ ລົງກວດກາຕົວຈິງ ເພື່ອຮັບຮອງການອອກອະນຸຍາດ ໃນຂັ້ນຕໍ່ໄປ.
3. ມອບໃຫ້ຫ້ອງການເຕັກໂນໂລຊີ ແລະ ການສື່ສານເມືອງ ເປັນໃຈກາງປະສານສົມທົບກັບພາກສ່ວນທີ່ກ່ຽວ ຂ້ອງຂັ້ນເມືອງ ເພື່ອລົງຕິດຕາມກວດກາ, ຖ້າພົບເຫັນຮ້ານບໍລິການທີ່ຂັດກັບແຈ້ງການສະບັບນີ້ ແມ່ນມອບໃຫ້ເມືອງດໍາເນີນການຕາມຂັ້ນຕອນຂອງກົດໝາຍ.

ດັ່ງນັ້ນ, ຈຶ່ງແຈ້ງການມາຍັງຜູ້ປະກອບການ ເພື່ອຮັບຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ຫົວໜ້າພະແນກເຕັກໂນໂລຊີ ແລະ ການສື່ສານແຂວງ.

ພະແນກເຕັກໂນໂລຊີ ແລະ ການສື່ສານ ແຂວງສາລະວັນ

ຈົມຄິດ ແສນທະວົງ